**ບົດສະຫລຸບຫຍໍ້**

ກອງທຶນຮ່ວມອະນຸລັກລະບົບນິເວດວິທະຍາເຂດຫລໍ່ແຫລມ (CEPF) ແມ່ນສ້າງຂຶ້ນມາ ເພື່ອແນໃສ່ປົກປັກຮັກສາຂົງເຂດພາກພື້ນທີ່ມີຄວາມອຸດົມຮັ່ງມີທາງດ້ານຊີວະນາໆພັນທີ່ຫລາກຫລາຍ ແລະ ກຳລັງຖືກໄພຄຸກຄາມຢ່າງຫນັກຫນ່ວງ ຊຶ່ງຮັບຮູ້ກັນດີກໍ່ແມ່ນຮຽກກັນວ່າຈຸດສຳຄັນທີ່ສຸດຂອງໂລກນັ້ນເອງ. ກອງທຶນ CEPF ເປັນການລິເລີ້ມໂດຍການຮ່ວມມື ຂອງອົງການພັດທະນາແຫ່ງປະເທດຝຣັ່ງ (AFD), ອົງການອະນຸລັກທຳມະຊາດສາກົນ, ກອງທຶນສິ່ງແວດລ້ອມໂລກ, ລັດຖະບານ ແຫ່ງປະເທດຍີ່ປຸ່ນ, ມູນນິທິຈອນດີ ແລະ ແຄັດເທີຣີນ ທີ ແມັກອາເທີ (John D. and Catherine T. MacArthur) ແລະ ທະນາຄານໂລກ.

ເປົ້າໝາຍຫລັກໆທີ່ເປັນພື້ນຖານ ແມ່ນເພື່ອຮັບປະກັນ ໃຫ້ອົງການຈັດຕັ້ງເພື່ອສັງຄົມຕ່າງໆ ເຊັ່ນ: ອົງການຈັດຕັ້ງຊຸມຊົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ, ສະຖາບັນການສຶກສາ ແລະ ວິສາຫາກິດເອກະຊົນຕ່າງໆ ໄດ້ເຂົ້າຮ່ວມເຄື່ອນໄຫວໃນການອະນຸລັກຊີວະນາໆພັນໃນເຂດພາກພື້ນສຳຄັນແຫ່ງນີ້. ແຕ່ເພື່ອໃຫ້ຮັບປະກັນວ່າອົງການຈັດຕັ້ງເລົ່ານັ້ນເຮັດສຳເລັດຄວາມພະຍາຍາມໄດ້ ມັນຈຳເປັນຈະຕ້ອງປະກອບເສີມວຽກງານນີ້ ເຂົ້າໃສ່ຍຸດທະສາດ ແລະ ແຜນງານແຫ່ງຊາດຕ່າງໆຂອງລັດຖະບານ ແລະ ກອງທຶນອະນຸລັກອື່ນໆທີ່ມີຢູ່. ເພື່ອຢາກເຮັດໄດ້ຄືແນວເຊັ່ນນັ້ນ ກອງທຶນ CEPF ໄດ້ສະຫນັບສະຫນູນຄວາມພະຍາຍາມການເຮັດວຽກຮ່ວມພັນທະມິດກັບອົງການຈັດຕັ້ງຕ່າງໆ ໂດຍມີຈຸດປະສົງເພື່ອຮວມເອົາຄວາມອາດສາມາດເຂົ້າຫາກັນ ແລະ ຫລຸດຜ່ອນການທັບຊ້ອນຂອງວຽກ ເພື່ອສ້າງໃຫ້ວຽກງານອະນຸລັກແຜ່ກ້ວາງອອກໄປ ແລະ ມີລັກສະນະປະສານງານກັນ. ວິທີທາງຢ່າງຫນຶ່ງທີ່ກອງທຶນໄດ້ປະຕິບັດໃນດ້ານນີ້ ກໍ່ແມ່ນການກະກຽມສ້າງ "ບົດເອກະສານລະອຽດກ່ຽວກັບລະບົບນິເວດ" ທີ່ສະແດງໃຫ້ເຫັນຍຸດທະສາດຮ່ວມກັນ ແລະ ການວິເຄາະສະຖານນະການຢ່າງລະອຽດຈາກການປຶກສາຫາລືກັບພາກສ່ວນຕ່າງໆໃນພູມມີພາກນີ້. ດັ່ງນັ້ນ, ເອກະສານດັ່ງກ່າວນີ້ ຈິ່ງກາຍເປັນຍຸດທະສາດ ກຳນົດແນວທາງການລົງທຶນໃນຊ່ວງໄລຍະ 5 ປີ ຂອງກອງທຶນ CEPF .

ເນື້ອໃນໃຈຄວາມຂອງເອກະສານສະບັບນີ້ ແມ່ນນຳສະເຫນີ ລາຍລະອຽດກ່ຽວກັບລະບົບນິເວດວິທະຍາເຂດສຳຄັນທີ່ສຸດໃນພາກພື້ນ ອິນໂດ-ມຽນມ້າ ທີ່ກວມເອົາພື້ນທີ່ໆບໍ່ແມ່ນທາງທະເລ ໃນປະເທດ ກຳປູເຈຍ, ລາວ, ມຽນມ້າ, ໄທ ແລະ ຫວຽດນາມ ແລະ ບາງສ່ວນຂອງປະເທດຈີນທາງພາກໃຕ້. ດ້ວຍຄຸນລັກສະນະພິເສດຂອງພັນພືດ ແລະ ສັດປະຈຳຖິ່ນໃນພູມມີພາກນີ້ມີລະດັບສູງ ແລະ ຖິ່ນທີ່ຢູ່ອາໃສທຳມະຊາດຍັງເຫລືອຫນ້ອຍ, ເຂດພາກພື້ນ ອິນໂດ-ມຽນມ້າ ຈິ່ງໄດ້ຈັດເປັນຫນຶ່ງໃນ 10 ຈຸດຮ້ອນແຮງ ຫລືສຳຄັນທີ່ສຸດທາງດ້ານຊີວະນາໆພັນຂອງໂລກທີ່ບໍ່ມີບ່ອນອື່ນມາປຽບທຽບໄດ້ ແລະ ເປັນຫນຶ່ງໃນ 5 ແຫ່ງທີ່ຖືກໄພຄຸກຄາມຫລາຍທີ່ສຸດ. ເຂດພາກພື້ນ ອິນໂດ-ມຽນມ້າ ເປັນເຂດທີ່ມີປະຊາກອນມະນຸດຫລາຍກວ່າ

ເຂດສຳຄັນແຫ່ງອື່ນໆຂອງໂລກ ແລະ ຖິ່ນທີ່ຢູ່ອາໃສທຳມະຊາດຍັງເຫລືອໃນເຂດນີ້ ຫລຸດລົງຢ່າງວ່ອງໄວ ແລະ ກຳລັງປະເຊີນຫນ້າກັບຄວາມກົດດັນສູງຈາກສະພາບຖິ່ນທີ່ຢູ່ອາໃສ ສູນເສຍ, ຊຸດໂຊມລົງ ແລະ ຖືກຕັດແຍກ ແລະ ຮວມທັງການນຳໃຊ້ຊັບພະຍາກອນທຳມະຊາດຫລາຍເກີນ ຂອບເຂດອີກດ້ວຍໃນພູມມີພາກນີ້.

ການປັບປຸງບົດເອກະສານລະອຽດກ່ຽວກັບລະບົບນິເວດ

ກອງທຶນຮ່ວມອະນຸລັກລະບົບນິເວດວິທະຍາເຂດຫລໍ່ແຫລມ (CEPF) ໄດ້ໃຫ້ທຶນແກ່ອົງການຈັດຕັ້ງສັງຄົມໃນເຂດພາກພື້ນ ອິນໂດ-ມຽນມ້າ ມາຕັ້ງແຕ່ປີ 2008 ໂດຍອີງໃສ່ໃຈຄວາມໃນເອກະສານລະອຽດກ່ຽວກັບລະບົບນິເວດທີ່ສ້າງຂຶ້ນສະບັບທຳອິດ ໃນປີ 2003 ໂດຍຜ່ານຂະບວນການປຶກສາຫາຂອງຫລາຍພາກສ່ວນທີ່ກ່ຽວຂ້ອງ. ແຕ່ໃນນີ້ປະຈຸບັນນີ້ ເຫັນໄດ້ມີຫລາຍສິ່ງຫລາຍຢ່າງແມ່ນໄດ້ປ່ຽນໄປຈາກສະບັບຕົ້ນທີ່ສ້າງຂຶ້ນກ່ອນຫນ້ານັ້ນ ເຊັ່ນ: ການປ່ຽນແປງລະດັບຄວາມ ສຳຄັນຂອງໄພຂົ່ມຂູ່ຕໍ່ຊີວະນາໆພັນ ແລະ ມີສິ່ງ ທີ່ທ້າທາຍຫລາຍສິ່ງຫລາຍຢ່າງໄດ້ເກີດຂຶ້ນມາໃຫມ່ ເຊັ່ນ: ການສ້າງເຂື່ອນໄຟຟ້າພະລັງງານນ້ຳ, ການປູກ ພືດອຸດສະຫະກຳ, ການຂຸດຄົ້ນບໍ່ແຮ່ ແລະ ການປ່ຽນແປງດິນຟ້າອາກາດ. ນອກຈາກນັ້ນ ກໍ່ມີເຫດການປ່ຽນແປງຢ່າງໃຫຍ່ຫລວງທາງດ້ານຮູບແບບການລົງທຶນເຂົ້າໃນດ້ານການອະນຸລັກ ໂດຍຜູ້ທີ່ເຄີຍໃຫ້ທຶນອະນຸລັກຊີວະນາໆພັນທີ່ຜ່ານມານັ້ນ ໄດ້ຫັນປ່ຽນແຜນງານຂອງເຂົາເຈົ້າໃສ່ເຂດບຸລິມະສິດອື່ນໆ ຫລື ງົດທຶນຊ່ວຍເຫລືອໃນຂົງເຂດພາກພື້ນນີ້ໄປພ້ອມໆກັນ. ແຕ່ໃນອີກດ້ານຫນຶ່ງ, ຊ່ອງວ່າງການປະຕິບັດວຽກງານສຳລັບອົງການຈັດຕັ້ງສັງຄົມໄດ້ຂະຫຍາຍກວ້າງຂວາງອອກໄປຢ່າງຕໍ່ເນື່ອງ ໃນເກືອບທຸກໆປະເທດ ຊຶ່ງເປີດໂອກາດໃຫ້ອົງ ຈັດຕັ້ງລະດັບຊາດ, ທ້ອງຖິ່ນ ແລະ ຊຸມຊົນ ໄດ້ມີບົດບາດເຂົ້າຮ່ວມວຽກງານອະນຸລັກຫລາຍຂຶ້ນ. ສິ່ງສຳຄັນທີ່ສຸດ ກອງທຶນອະນຸລັກລະບົບວິທະຍາເຂດທີ່ຫລໍ່ແຫລມ ຮ່ວມກັບກອງທຶນອື່ນໆໄດ້ພ້ອມກັນສ້າງເວທີທີ່ເຂັ້ມແຂງ ໃນການສະແດງຜົນງານຂອງວຽກງານ ດ້ານອະນຸລັກ, ການປະຕິບັດທີ່ດີ, ຂໍ້ມູນຂ່າວສານ ແລະ ຄວາມອາດສາມາດທີ່ສາມາດສານຕໍ່ໄປໄດ້.

ໃນເດືອນ ເມສາ ປີ 2011, ກອງທຶນ CEPF ໄດ້ຮວມຕົວກັບກອງທຶນ ແມັກກາເທີ້, ກອງທຶນ ມາກາເຣັດຄາກິລ ແລະ ກອງທຶນ ເມົກໃນ້ ເພື່ອສົນທະນາປຶກສາຫາລືຮ່ວມກັນ ດ້ານຄວາມສົນໃຈຂອງແຕ່ລະຝ່າຍທີ່ກ່ຽວພັນກັບ ການປະສານງານການລົງທຶນໃຫ້ກັບອົງການຈັດຕັ້ງສັງຄົມ ໃນເຂດອ່າງແມ່ນ້ຳຂອງຕອນລ່າງ ຊຶ່ງເຂດພາກພື້ນ ອິນໂດ-ມຽນມ້າ ກໍ່ແມ່ນກວມເອົາໂດຍລວມ. ພາຍຫລັງຕໍ່ມາ ທັງຫມົດ 4 ກອງທຶນ ໄດ້ຕົກລົງເຫັນສະຫນັບສະຫນູນທຶນ ເພື່ອປັບປຸງເນື້ອໃນເອກະສານລະອຽດສະບັບນີ້ ເພື່ອເຮັດໃຫ້ສົມບູນຂຶ້ນ. ຂະບວນການປັບປຸງເອກະສານດັ່ງກ່າວນີ້ ແມ່ນໄດ້ລິເລີ່ມໃນເດືອນ ມິຖຸນາ ປີ 2011 ແລະ ສຳເລັດລົງໃນ ເດືອນ ມັງກອນ ປີ 2012.

ຜູ້ທີ່ປະສານງານຫລັກໆໃນຂະບວນການປັບປຸງເອກສານນີ້ ແມ່ນນໍາໂດຍຄະນະກອງເລຂາຂອງກອງທຶນ
CEPF ຮ່ວມກັບ ອົງການອະນຸລັກນັກສາກົນໃນພາກພື້ນອິນໂດຈີນ, ອົງການອະນຸລັກສາກົນ ປະເທດຈີນ,
ສວນພຶກສາຊາດ ກາດູຣີ, ສະຖາບັນສັມຫານາ ແລະ ກອງທຶນພັດທະນາສະພາບແວດ ລ້ອມສີຊຽວຢູນ
ນານ. ໃນຊ່ວງທີ່ດໍາເນີນຂະບວນການປັບປຸງ ໄດ້ມີການປຶກສາຫາລືກັບພາກສ່ວນຕ່າງໆ ຫລາຍກວ່າ 470
ອົງການ ໂດຍ ຈັດປະຊຸມປຶກສາຫາລືເປັນຊຸດໆ, ຈັດປະຊຸມເປັນກຸ່ມນ້ອຍໆ ຫລື ຖາມ-ຕອບທາງອີແມວ
ຈົນວ່າເກີດເປັນເອກະສານສະບັບສຸດທ້າຍ ທີ່ສະແດງເຖິງຫມາກຜົນສໍາເລັດ ຂອງການຮ່ວມມືເຊິ່ງກັນແລະ
ກັນຢ່າງແທ້ຈິງຂອງອົງການຈັດຕັ້ງສັງຄົມ, ອົງການຈັດຂອງຕັ້ງລັດຖະບານ ແລະ ບັນດາກອງທຶນອື່ນໆ.

## ຍຸດທະສາດການລົງທຶນ ແລະ ຂົງເຂດກອງທຶນ **CEPF.**

ເອກະສານລະອຽດກ່ຽວກັບລະບົບນິເວດວິທະຍາ ໄດ້ສະເຫນີຜົນການວິເຄາະສະຖານນະການທົ່ວໄປ ຂອງ
ເຂດພື້ນທີ່ສໍາຄັນ ພາກພື້ນ ອິນໂດ-ມຽນມ້າ ທີ່ກ່ຽວພັນເຖິງ ຄວາມສໍາຄັນການອະນຸລັກຊີວະນາໆພັນ, ສະ
ພາບເສດຖະກິດ-ສັງຄົມ, ນະໂຍບາຍ ແລະ ຂໍ້ຄວາມທີ່ກ່ຽວກັບອົງການຈັດຕັ້ງສັງຄົມຕ່າງໆ. ເອກະສານ
ດັ່ງກ່າວ ໄດ້ກໍານົດຫມາກຜົນຂອງວຽກງານອະນຸລັກທີ່ສາມາດວັດຈໍານວນໄດ້ ໃນລະດັບຊະນິດ, ສະຖານ
ທີ່ ແລະ ເຂດປ່າເຊື່ອມຕໍ່ (ກໍ່ຄືທົ່ວຂົງເຂດພາກພື້ນ) ພ້ອມທັງຜົນການປະເມີນໄພຂົ່ມຂູ່ທາງກົງຕໍ່ຊີວະ
ນາໆພັນ ແລະ ສາຍເຫດຂອງມັນນໍາອີກດ້ວຍ. ການວິເຄາະສະຖານນະການ ແມ່ນລວມມີການຕີລາຄາ
ປະເມີນຜົນການລົງທຶນການອະນຸລັກໃນປະຈຸບັນ ແລະ ຜົນສະທ້ອນຂອງການປ່ຽນແປງດິນຟ້າອາກາດຕໍ່
ກັບການອະນຸລັກຊີວະນາໆພັນ. ເອກະສານລະອຽດກ່ຽວກັບລະບົບນິເວດວິທະຍານີ້ ຕໍ່ມາຈິ່ງເຊື່ອມໂຍງ
ໄປເຖິງຍຸດທະສາດເປົ້າຫມາຍການລົງທຶນຂອງຜູ້ໃຫ້ທຶນ ທີ່ສົນໃຈຢາກສະຫນັບສະຫນູນວຽກງານອະນຸ
ລັກໃຫ້ກັບບັນດາອົງການຈັດຕັ້ງສັງຄົມຕ່າງໆ. ໃນຍຸດທະສາດດັ່ງກ່າວນີ້ ກໍ່ແມ່ນເວົ້າເຖິງທີ່ວ່າ ຂອບເຂດ
ການລົງທຶນ ຂອງ CEPF ຈະລົງໃສ່ໃນຈຸດໃດຈິ່ງຈະໃຫ້ມີຄຸນຄ່າມະຫາສານທີ່ສຸດ.

ຂອບເຂດການລົງທຶນ ຂອງກອງທຶນ CEPF ກວາມເອົາໄລຍະເວລາ 5 ປີ ທີ່ສານຕໍ່ຈາກການລົງທຶນ
ແລະ ທຶນປະກອບສ່ວນຈາກກອງທຶນອື່ນໆໃນເມື່ອກ່ອນ ຊຶ່ງໃນນັ້ນຈະກວາມລວມເອົາ ປະເພດໂອກາດ
ການລົງທຶນແບບມີເປົ້າຫມາຍ, ທິດທາງຍຸດທະສາດທີ່ກໍານົດເປັນໄລຍະ, ແຕກຍ່ອຍອອກເປັນຍຸດທະ
ສາດການລົງທຶນ ທີ່ກໍານົດປະເພດກິດຈະກໍາທີ່ຈະມີສິດໄດ້ຮັບການສະຫນັບສະຫນູນທຶນ ຈາກ CEPF.
ພື້ນຖານທາງຊີວະວິທະຍາສໍາລັບການລົງທຶນຂອງ CEPF ໃນເຂດສໍາຄັນພາກພື້ນ ອິນໂດ-ມຽນມ້າ ຈະ
ຕ້ອງແມ່ນຄາດຫມາຍຜົນໄດ້ຮັບໃນດ້ານການອະນຸລັກທີ່ເກີດຕາມມາ ເຊັ່ນ: ຈໍານວນຊະນິດ, ສະຖານທີ່
ແລະ ເຂດປ່າເຊື່ອມຕໍ່ ທີ່ຈະຕ້ອງໄດ້ປົກປັກຮັກສາ ເພື່ອຫລຸດຜ່ອນການສູນເສຍຊີວະນາໆພັນທີ່ສໍາຄັນ
ໃນລະດັບໂລກ. ຄາດຫມາຍຜົນໄດ້ຮັບຈາກການອະນຸລັກໃນເຂດພາກພື້ນ ອິນໂດ-ມຽນມ້າ ແມ່ນໄດ້ກໍາ
ນົດຢ່າງຈະແຈ້ງມາແລ້ວໃນຊ່ວງເວລາທີ່ສ້າງເອກະສານສະບັບທໍາອິດ. ສໍາລັບໃນຊ່ວງໄລຍະເວລາທີ່ດໍາ

ເນີນຂະບວນການປັບປຸງເອກະສານເນື້ອຄວາມລະອຽດ ບັນດາຄາດ ຜົນໄດ້ຮັບຈາກການອະນຸລັກກໍ່ແມ່ນໄດ້ມີການກວດແກ້ຄືນໃຫມ່ເພື່ອໄຕ່ຕອງໃຫ້ສອດຄ່ອງກັບສະພາບການປ່ຽນແປງຕົວຈິງຂອງບັນດາຊະນິດພັນ, ສະຖານທີ່, ແລະ ເຂດປ່າເຊື່ອມຕໍ່ ແລະ ຕາມຂໍ້ມູນໃຫມ່ທີ່ມີ ເຊັ່ນ: ປະເທດມຽນມ້າ. ໃນນັ້ນ ເພື່ອເຮັດໃຫ້ການລົງທຶນ ຈາກກອງທຶນ CEPF ແລະ ກອງທຶນອື່ນໆໃຫ້ມີປະສິດທິຜົນສູງ ຈຳນວນຊະນິດພັນ, ຈຳນວນສະຖານທີ່ ແລະ ເຂດປ່າເຊື່ອມຕໍ່ ກໍ່ແມ່ນໄດ້ຈັດບຸລິມະສິດຢ່າງຄັກແນ່ ໂດຍຜ່ານຂະບວນການປຶກສາຫາລືກັບຫລາຍໆພາກສ່ວນກ່ຽວຂ້ອງ ທີ່ນຳໃຊ້ຂໍ້ພິຈາລະນາທີ່ໄດ້ມາດຕະຖານ ໂດຍຈະເນັ້ນໃສ່ຄວາມຮີບດ່ວນຈະຕ້ອງປະຕິບັດການອະນຸລັກ ແລະ ໂອກາດທີ່ຈະສົ່ງເສີມວຽກງານອະນຸລັກທີ່ມີຢູ່ໃນຂະນະນີ້ໃຫ້ສືບຕໍ່ເນື່ອງ.

ຄາດຫມາຍຜົນໄດ້ຮັບທີ່ໄດ້ກຳນົດ ແມ່ນມີທັງຫມົດ 754 ຊະນິດ, 509 ຈຸດສະຖານທີ່ ແລະ ເຂດປ່າເຊື່ອມຕໍ່ 66 ແຫ່ງ. ໃນຈຳນວນເລົ່ານັ້ນ ມີ 152 ຊະນິດ, 74 ສະຖານທີ່ ແລະ 4 ເຂດປ່າເຊື່ອມຕໍ່ແມ່ນໄດ້ຈັດເປັນບຸລິມະສິດສູງສຸດສຳລັບການລົງທຶນໃນການອະນຸລັກ. ຈຳນວນຊະນິດທີ່ຈັດເປັນບຸລິມະສິດເຫັນວ່າເພີ່ມຂື້ນຫລາຍກວ່າ 67 ຊະນິດທີ່ໄດ້ກຳນົດໃນບົດເອກະສານສະບັບຕົ້ນ. ເຫດຜົນຫລັກໆອາດຈະແມ່ນເນື່ອງມາຈາກວ່າໄດ້ຮວມເອົາຊະນິດພືດພັນເຂົ້າໃສ່ ເປັນຄັ້ງທຳອິດ ແລະ ການວິເຄາະຂໍ້ມູນກວາມເອົາພື້ນທີ່ກວ້າງກວ່າເກົ່າ ເຊັ່ນ: ລວມເອົາປະເທດມຽນມ້າ ຊຶ່ງເປັນສະຖານທີ່ຖິ່ນທີ່ຢູ່ອາໃສຂອງຫລາຍໆຊະນິດທີ່ບໍ່ພົບເຫັນໃນແຫ່ງອື່ນໆຢູ່ໃນທົ່ວຂົງເຂດພາກພື້ນສຳຄັນນີ້ (ຊະນິດປະຈຳຖິ່ນ).

ເຂດປ່າເຊື່ອມຕໍ່ທີ່ເປັນບຸລິມະສິດການລົງທຶນຂອງກອງທຶນ **CEPF** ໃນເຂດສຳຄັນພາກພື້ນ ອິນໂດ-ມຽນມ້າ




ຄວາມເຫັນເປັນເອກະພາບຈາກການປຶກສາຫາລືນຳກັນຂອງຫລາຍພາກສ່ວນກ່ຽວຂ້ອງ ກໍ່ຄືວ່າ ກອງທຶນ CEPF ຄວນຮັກສາ ເຂດບຸລິມະສິດທີ່ກຳນົດທາງພູມມີສາດໃນປະຈຸບັນນີ້ເອົາໄວ້ຄືເກົ່າ (ເຊັ່ນ: ສາຍນ້ຳຂອງ ແລະ ສາຂາສຳຄັນຂອງມັນ, ເຂດປ່າເຊື່ອມຕໍ່ ພູຫີນປູນ ຈີນ-ຫວຽດນາມ (ເມື່ອກ່ອນມີຊື່ວ່າເຂດພູຫີນປູນທາງພາກເໜືອ) ແລະ ເຂດອື່ນໆທີ່ມີນັ້ນ ແລະ ສະເໜີໃຫ້ເພີ່ມເຂົ້າຕື່ມຖ້າມີທຶນສະໜັບສະໜູນເພີ່ມ. ນອກຈາກນັ້ນ, ຄວາມເຫັນເປັນເອກະພາບອີກຢ່າງໜຶ່ງ ກໍ່ແມ່ນສະເໜີເອົາ ທະເລສາບ ກຳປູເຈຍ ແລະ ເຂດດິນທາມນ້ຳຖ້ວມຕ່າງໆ ແລະ ສາຍພູໄຮນານ ເຂົ້າເປັນເຂດປ່າເຊື່ອມຕໍ່ທີ່ເປັນບຸລິມະສິດເພີ່ມ ຊຶ່ງນີ້ແມ່ນສະທ້ອນໃຫ້ເຫັນຊອ່ງວ່າງຂອງທຶນສະໜັບສະໜູນ ແລະ ການເຕີບໂຕຢ່າງໄວວາຂອງໄພຂົ່ມຂູ່ຕ່າງໆທີ່ມີຕໍ່ສອງເຂດດັ່ງກ່າວນີ້. ເຂດບຸລິມະສິດຕ່າງໆ

ທີ່ຍັງບໍ່ທັນໄດ້ກຳນົດ ຢູ່ໃນປະເທດ ມຽນມ້າ ຊຶ່ງເປັນເຂດທີ່ຈັດຢູ່ໃນປະເພດລະດັບການລົງທຶນໃສ່ການອະນຸລັກຂ້ອນຂ້າງຕ່ຳໃນປະຈຸບັນ ເຫັນວ່າມີຫລາຍໆຈຸດສະຖານທີ່ ແລະ ເຂດປ່າເຊື່ອມຕໍ່ ແມ່ນກຳລັງໄດ້ຮັບໄພຄຸກຄາມຢ່າງຫນັກຫນ່ວງ ແລະ ທັງຕ້ອງການຍຸດທະສາດແກ້ໄຂທີ່ແຕກຕ່າງຈາກເຂດອື່ນໆໃນເຂດສຳຄັນພູມມີພາກນີ້. ດັ່ງນັ້ນ, ຫລາຍໆສະຖານທີ່ ໃນປະເທດ ມຽນມ້າ ຄວນຈະໃໄດ້ທັເປັນເຂດບຸລິມະສິດໃນເມື່ອກ່ອນ ແລະ ບຸລິມະສິດຂອງການລົງທຶນໃນການອະນຸລັກສະເພາະອີກດ້ວຍ.

ສະເພາະຂົງເຂດບຸລິມະສິດສຳລັບການລົງທຶນໃນດ້ານການອະນຸລັກໃນຈຸດຫລໍ່ແຫລມທີ່ວ່ານີ້ ແມ່ນກຳນົດຮ່ວມກັນດ້ວຍຂະບວນການປຶກສາຫາລືຂອງຫລາຍໆພາກສ່ວນທີ່ກ່ຽວຂ້ອງ ໂດຍອີງໃສ່ການວິເຄາະບັນຫາໄພຂົ່ມຂູ່ຫລັກໆທີ່ມີຕໍ່ຊີວະນາໆພັນ ແລະ ສາຍເຫດຕົ້ນຕໍຂອງມັນໃນພູມມີພາກນີ້. ຜ່ານການຄົ້ນຄວ້າເຫັນວ່າ ໄພຂົ່ມຂູ່ທີ່ຈັດລະດັບທີສູງສຸດ ແມ່ນການລ່າ ແລະ ຄ້າຂາຍສັດປ່າ ທີ່ຄຸກຄາມແຕ່ລະຊະນິດ ສົ່ງຕໍ່ການສູນພັນ ແລະ ເກີດຜົນກະທົບຕໍ່ລະບົບນິເວດເປັນວົງກວ້າງ. ໄພຂົ່ມຂູ່ທີ່ຈັດທີ່ຢູ່ໃນລະດັບສູງຕໍ່ມາແມ່ນການຫັນປ່ຽນຖິ່ນທີ່ຢູ່ອາໃສທຳມະຊາດ ເພື່ອປູກພືດອຸດສະຫະກຳ ເຊັ່ນ: ຢາງພາລາ, ນ້ຳມັນປາມ, ຊາ ແລະ ພືດທີ່ເປັນສິນຄ້າປະເພດອື່ນໆ. ສິ່ງທີ່ເປັນໄພຂົ່ມລະດັບສູງອີກຕໍ່ມາແມ່ນການເຕີບໂຕຂອງການສ້າງເຂື່ອນໄຟຟ້າພະລັງງານນ້ຳ ຊຶ່ງເປັນໄພຄຸກຄາມຢ່າງຫນັກ ຫນ່ວງຕໍ່ລະບົບນິເວດແມ່ນ້ຳສຳຄັນຕ່າງໆໃນເຂດສຳຄັນດັ່ງກ່າວນີ້. ຄວາມເຫັນເປັນເອກະພາບ ສຽງດຽວກັນກໍ່ຄືວ່າ ບັນຫາໄພຂົ່ມຂູ່ 3 ຢ່າງທີ່ກ່າວມານີ້ແມ່ນທະວີຄວາມຮຸນແຮງຂຶ້ນຢ່າງຊັກໄຊ້ ແລະ ມີແນວໂນ້ມສືບຕໍ່ໄປຢູ່ພາຍໃນໄລຍະເວລາສັ້ນ. ໃນກໍລະນີໃດກໍ່ຕາມ ທັງຫມົດໄພຂົ່ມຂູ່ເລົ່ານີ້ ແມ່ນ ກ່ຽວພັນກັບເສດຖະກິດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນທີ່ເພິ່ງພາທຳມະຊາດໂດຍສະຫນອງໃຫ້ຢ່າງຕໍ່ເນື່ອງຈາກລະບົບນິເວດວິທະຍາທີ່ສົມບູນນັ້ນເອງ.

ດັ່ງນັ້ນ, ເພື່ອແກ້ໄຂບັນຫາໄພຂົ່ມຂູ່ຕ່າງໆໆທີ່ກ່າວມາ ຫລື ໄພຂົ່ມຂູ່ອື່ນໆ ແລະ ສາຍເຫດ ຫລັກໆຂອງບັນຫາ ກອງທຶນ CEPF ຈຶ່ງໄດກຳນົດຂົງເຂດການລົງທຶນ ກວມເອົາ 21 ແຫ່ງບຸລິມະສິດ ຈັດເປັນ 6 ຫມວດທິດທາງຍຸດທະສາດ. ຂົງເຂດທີ່ກຳນົດນີ້ ແມ່ນຜົນໄດ້ຮັບຈາກຂະ ບວນການຄົ້ນຄວ້າປຶກສາຫາລືຂອງຫລາຍໆພາກສ່ວນທີ່ກ່ຽວຂ້ອງທີ່ມີຄວາມເປັນເອກະພາບນຳກັນ ທີ່ມີຕົວແທນເຂົ້າຮ່ວມມາຈາກອົງການຈັດຕັ້ງສັງຄົມ, ພາກລັດຖະບານ ແລະ ກອງທຶນຕ່າງໆທີ່ຮ່ວມກັບມື ກັບ CEPF. ຂອບເຂດຍຸດທະສາດການລົງທຶນ ຂອງ CEPF ແມ່ນກວາມ 38 ບຸລິມະສິດການລົງທຶນ ທີ່ຈັດເປັນ 11 ຫມວດທິດທາງຍຸດທະສາດ. ຍຸດທະສາດດັ່ງກ່າວນີ້ ແມ່ນເປັນພື້ນຖານການປະສານງານສຳລັບການລົງທຶນຂອງກອງທຶນ CEPF ແລະ ຜູ້ໃຫ້ທຶນອື່ໆທີ່ສົນໃຈໃນການສະຫນັບສະຫນູນວຽກງານການອະນຸລັກ ທີ່ອົງການຈັດຕັ້ງສັງຄົມເປັນຜູ້ນຳພາຫລັກໆໃນການຈັດຕັ້ງປະຕິບັດ.

ທິດທາງຍຸດທະສາດ ແລະ ບຸລິມະສິດການລົງທຶນຂອງກອງທຶນ CEPF ໃນເຂດຫລົ່ແຫລມພາກພື້ນອິນໂດ-ມຽນມ້າ.

| ທິດທາງຍຸດທະສາດ | ບຸລິມະສິດການລົງທຶນ |
|---|---|
| 1. ປົກປັກຮັກສາຊະນິດພັນທີ່ຖືກໄພຂົ່ມຂູ່ໃນລະດັບໂລກໂດຍສຸມໃສ່ແກ້ໄຂບັນຫາໄພຂົ່ມຂູ່ | 1.1 ປັບປຸງແປງຮູບແບບມາດຕາການທົດລອງເພື່ອອະນຸລັກປະຊາກອນສຳຄັນຂອງຊະນິດບຸລິມະສິດ ເຂົ້າເປັນແຜນງານອະນຸລັກໃນໄລຍະຍາວນານ. |
| | 1.2 ສ້າງວິທີການດີທີ່ສຸດ ເພື່ອອະນຸລັກຊະນິດສັດນ້ຳຈືດ ທີ່ຖືກໄພຄຸມຄາມສູງ ແລະ ອາໃສຢູ່ປະຈຳຖິ່ນສະເພາະ |
| | 1.3 ສຶກສາຄົ້ນຄວ້າຊະນິດທີ່ໃກ້ຈະສູນພັນໃນລະດັບໂລກ ທີ່ຕ້ອງການປັບປຸງຂໍ້ມູນດ້ານສະຖານນະພາບ ແລະ ການກະຈ່າຍ |
| | 1.4 ຊຸກຍູ້ທຶນທີ່ມີຢູ່ໃຫ້ກາຍເປັນເຄື່ອງມືທີ່ມີປະສິດທິຜົນສູງສຳລັບການອະນຸລັກຊະນິດສຳຄັນທີ່ເປັນບຸລິມະສິດໃນເຂດສຳຄັນ |
| 2. ສາທິດວິທີການແກ້ໄຂບັນຫາແບບໃໝ່ ຕໍ່ກັບການຄ້າຂາຍ ແລະ ບໍລິໂພກ ສັດປ່າ | 2.1 ຊຸກຍູ້ອົງການຈັດຕັ້ງປະຕິບັດ ຫລື ບັງຄັບໃຊ້ກົດໝາຍ ເພື່ອປາບເຄືອຂ່າຍການຄ້າຂາຍສັດປ່າ ໂດຍນຳເອົາວິທີການທີ່ດີທີ່ສຸດໃນໂລກທີ່ມີທັງການສືບສວນ ແລະ ຜູ້ບອກຂ່າວ |
| | 2.2 ເອື້ອອຳນວຍການຮ່ວມມືຂອງບັນດາອົງການຈັດຕັ້ງທີ່ບັງຄັບໃຊ້ກົດໝາຍ ແລະ ຜູ້ຈັດຕັ້ງປະຕິບັດອື່ນໆ ເພື່ອຮ່ວມກັນຫລຸດຜ່ອນການຄ້າຂາຍ ສັດປ່າຂ້າມຊາຍແດນ |
| | 2.3 ເຮັດວຽກກັບບໍລິສັດເອກະຊົນ ເພື່ອສະໜັບສະໜູນການຈຳກັດທີ່ແບບສະໝັກໃຈ ໃນດ້ານຂົນສົ່ງ, ຄ້າຂາຍ ແລະ ບໍລິໂພກສັດປ່າໃນລະດັບສາກົນ |
| | 2.4 ສະໜັບສະໜູນການໂຄສະນາເຜີຍແຜ່, ການຕະຫລາດທາງສັງຄົມ, ສາຍດ່ວນ ແລະ ໂຄງການສື່ສານໄລຍະຍາວນານອື່ນໆ ເພື່ອຫລຸດຜ່ອນຄວາມຕ້ອງການບໍລິໂພກສັດປ່າ ແລະ ສ້າງໃຫ້ສາທາລະນະຊົນສະໜັບສະໜູນການບັງຄັບໃຊ້ກົດໝາຍສັດປ່າ |
| 4. ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນທ້ອງຖິ່ນ ເພື່ອເຂົ້າຮ່ວມໃນການອະນຸລັກ ແລະ ຄຸ້ມຄອງຈັດສັນເຂດບຸລິມະສິດອະນຸລັກຊີວະນາໆພັນສຳຄັນ | 4.1 ໂຄສະນາເຜີຍແຜ່ລະບຽບກົດໝາຍກ່ຽວກັບການອະນຸລັກຊີວະນາໆພັນສະເພາະກຸ່ມເປົ້າໝາຍ ໃນເຂດທີ່ເປັນບຸລິມະສິດ |
| | 4.2 ທົດລອງ ແລະ ຜັນຂະຫຍາຍ ປ່າໄມ້ຊຸມຊົນ, ການປະໂມງຊຸມຊົນ ແລະ ປ່າສະຫງວນທີ່ຄຸ້ມຄອງໂດຍຊຸມຊົນ |
| | 4.3 ສ້າງກົນໄກການຄຸ້ມຄອງຈັດສັນປ່າສະຫງວນທີ່ສາມາດເຮັດໃຫ້ຊຸມຊົນເຂົ້າມີສ່ວນຮ່ວມໃນທຸກໆລະດັບຂອງວຽກງານຈັດສັນ |

| ທິດທາງຍຸດທະສາດ | **ບຸລິມະສິດການລົງທຶນ** |
|---|---|
| | 4.4 **ດຳເນີນການວິເຄາະຊ່ອງວ່າງເຂດຊີວະນາໆພັນທີ່ສຳຄັນໃນປະເທດມຽນມ້າ ແລະ ສົ່ງເສີມການຂະຫຍາຍເຄືອຂ່າຍປ່າສະຫງວນທີ່ນຳໃຊ້ຕົວແບບຊຸມຊົນມີສ່ວນຮ່ວມ** |
| **6. ຮວມເອົາຜູ້ຈັດຕັ້ງປະຕິບັດທີ່ສຳຄັນເພື່ອຜັນຂະຫຍາຍ ຊີວະນາໆພັນ, ຊຸມຊົນ ແລະ ຊີວິດການເປັນຢູ່ເຂົ້າໃນແຜນພັດທະນາ ໃນເຂດປ່າເຊື່ອມຕໍ່ທີ່ເປັນບຸລິມະສິດ** | 6.1 **ສະຫນັບສະຫນູນວຽກອົງການຈັດຕັ້ງສັງຄົມ ເພື່ອວິເຄາະນະໂຍບາຍ, ແຜນການ, ແລະ ແຜນງານ ດ້ານການພັດທະນາ, ແລະ ປະເມີນຜົນກະທົບຕໍ່ຊີວະນາໆພັນ, ຕໍ່ຊຸມຊົນ ແລະ ຊີວິດການເປັນຢູ່ ແລະ ພ້ອມທັງສະເຫນີທາງເລືອກ ທີ່ເປັນມາດຕະການເຫມາະສົມສຳລັບແກ້ໄຂບັນຫາຖ້າບ່ອນໃດຕ້ອງການ** |
| | 6.2 **ຮ່ວມເອົາຄຸນຄ່າຊີວະນາໆພັນ ແລະ ການບໍລິການຂອງລະບົບນິເວດວິທະຍາຂອງເຂດປ່າເຊື່ອມຕໍ່ເຂົ້າໃນການວາງແຜນດ້ານການພັດທະນາ ແລະ ການນຳໃຊ້ທີ່ດິນ ໃນທຸກໆລະດັບ** |
| | 6.3 **ພັດທະນາລະບຽບແຜນ ແລະ ໂຄງການສາທິດ ເພື່ອຟື້ນຟູລະບົບນິເວດວິທະຍາ ທີ່ປັບປຸງການອະນຸລັກຊີວະນາໆພັນຂອງແຜນງານປ່າໄມ້ແຫ່ງຊາດຊາດ** |
| | 6.4 **ຮ່ວມເອົາສື່ມວນຊົນຕ່າງໆໃຫ້ເປັນເຄື່ອງມືໂຄສະນາເຜີຍແຜ່ ແລະ ແຈ້ງໃຫ້ສາທາລະນະຊົນຮັບຮູ້ປະເດັນດ້ານສິ່ງແວດລ້ອມ** |
| **8. ສ້າງຄວາມອາດສາມາດຂອງອົງການຈັດຕັ້ງສັງຄົມ ເພື່ອປະຕິບັດວຽກງານອະນຸລັກຊີວະນາໆພັນ, ພັດທະນາຊຸມຊົນ ແລະ ຊີວິດການເປັນຢູ່ໃນລະດັບພູມມີພາກ, ລະດັບຊາດ, ລະດັບທ້ອງຖິ່ນ ແລະ ລະດັບຮາກຫຍ້າ** | 8.1 **ສະຫນັບສະຫນູນກິດຈະກຳເຄືອຂ່າຍທີ່ສາມາດສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງສັງຄົມເພື່ອແກ້ໄຂໄພຂົ່ມຂູ່ຕ່າງໆທີ່ເກີດຂື້ນ** |
| | 8.2 **ໃຫ້ການສະຫນັບສະຫນູນສ້າງອົງການຈັດສັງຄົມພາຍໃນ ປະເທດ** |
| | 8.3 **ສ້າງກົນໄກສູນການຮຽນເພື່ອໃຫ້ອາສາສະຫມັກໃນອົງການຈັດຕັ້ງສັງຄົມໄດ້ຝຶກອົບຮົມ** |
| **11.ຕຽມການຄວາມເປັນຜູ້ນຳທີ່ມີຍຸດທະສາດ ແລະ ປະສານງານຢ່າງມີປະສິດທິຜົນຂອງການລົງທຶນໃນການອະນຸລັກ ໂດຍທີມງານຈັດຕັ້ງປະຕິບັດລະດັບພູມມີພາກ** | 11.1 ບໍລິຫານ ແລະ ປະສານງານຂະບວນການຈັດການທຶນ ແລະ ລະບຽບການຂອງກອງທຶນ CEPF ເພື່ອຮັບປະກັນການປະຕິບັດຍຸດທະສາດການລົງທຶນໃຫ້ມີປະສິດທິຜົນສູງທົ່ວເຂດພື້ນທີ່ສຳຄັນ |
| | 11.2 ສ້າງເວທີສະພາສຳລັບກຸ່ມອົງການຈັດຕັ້ງສັງຄົມ ເພື່ອສ້າງໃຫ້ສະຖາບັນຕ່າງໆໄດ້ເຮັດວຽກຮ່ວມກັນ ທີ່ແນໃສ່ບັນລຸເປົ້າຫມາຍການອະນຸລັກອັນດຽວກັນທີ່ບັນລະຍາຍໃນເອກະສານລະອຽດນີ້. |

ຫມາຍເຫດ: ຄຳກະຈ່າງແຈ້ງໃນນີ້ໃຫ້ເບິ່ງຫນ້າອື່ນເພື່ອລາຍລະອຽດເພີ່ມເຕີມ, ຊຶ່ງໃສ່ຫມາຍເລກທິດທາງຍຸດທະສາດ ແລະ ບຸລິມະສິດການລົງທຶນໃນຂອບເຂດເຄື່ອນໄຫວ ຂອງ CEPF (ຍຸດທະສາດທີ 6) ຈາກນັ້ນຍຸດທະສາດລວມ (ທິດທາງຍຸດທະສາດ 11)

## ສະຫລຸບລວມ

ຖ້າເວົ້າເຖິງເລື່ອງຄວາມຫລາກຫລາຍທາງດ້ານຊະນິດພັນ ແລະ ຊະນິດທີ່ມີສະເພາະປະຈຳຖິ່ນ (ຫລື ຊະນິດທີ່ເຫັນຢູ່ໃນເຂດທ້ອງຖິ່ນແຫ່ງດຽວໃນໂລກ) ເຂດສຳຄັນໃນພູມມີພາກອິນ ໂດ-ມຽນມ້າແຫ່ງນີ້ ແມ່ນເປັນແຫ່ງໜຶ່ງຂອງໂລກທີ່ມີຄວາມສຳຄັນທີ່ສຸດທາງດ້ານຊີວະນາໆພັນ. ແຕ່ວ່າ ຍ້ອນຄວາມກົດດັນ ຈາກທີ່ມີປະຊາກອນມະນຸດສູງ, ການເຕີບໂຕດ້ານການພັດທະນາເສດຖະກິດຢ່າງວ່ອງໄວ ແລະ ປ່ຽນແປງ ຮູບແບບການບໍລິໂພກ ລະບົບນິເວດວິທະຍາໃນເຂດຫລໍ່ແຫລມທີ່ສຳຄັນໃນພາກພື້ນນີ້ຈຶ່ງໄດ້ຮັບການເພີ່ມ ທະວີຄວາມກົດດັນສູງຂຶ້ນ. ນັບແຕ່ປະຊາຄົມ ອະນຸລັກໂລກໄດ້ໃຫ້ຄວາມສົນໃຈໃນເຂດຫລໍ່ແຫລມດັ່ງກ່າວ ນີ້ ນັບແຕ່ປີ 1991 ແລະ ການພັດທະນາດ້ານການເມືອງໃນທາງທີ່ດີ ການຫລັ່ງໄຫລທຶນຊ່ວຍເຫລືອການ ພັດທະນາເຂົ້າມາໃນພາກພື້ນດັ່ງກ່າວນີ້ ຊຶ່ງເຫັນໄດ້ຢ່າງຈະແຈ້ງວ່າເກືອບໝົດທຸກໆປະເທດແມ່ນໄດ້ຮັບ ທຶນສະໜັບສະໜູນວຽກງານອະນຸລັກ ໂດຍຜ່ານອົງການຈັດຕັ້ງຂອງລັດຖະບານ ແລະ ອົງການຈັດຕັ້ງ ຊ່ວຍເຫລືອສາກົນຕ່າງໆ. ຜົນຕາມມາທີ່ເກີດຈາກການລົງທຶນໃນພູມມີພາກນີ້ປະກົດເຫັນໄດ້ວ່າ ໃນປະຈຸ ບັນນີ້ ມີເນື້ອທີ່ປ່າສະຫງວນທີ່ຮັບຮອງຢ່າງເປັນທາງການຂະຫຍາຍຫລາຍຂຶ້ນ ພ້ອມທັງພັດທະນາຍຸດທະ ສາດການອະນຸລັກທີ່ທີ່ສະແດງປະສິດທິຜົນຂອງການຄຸ້ມຄອງ ໃນທຸກໆປະເທດ.

ແຕ່ເຖິງຢ່າງໃດກໍ່ດີ, ໃນຊ່ວງປະຈຸບັນນີ້ ສັງເກດເຫັນວ່າທຶນສະໜັບສະໜູນດ້ານການອະນຸລັກຊີວະ ນາໆພັນຢູ່ໃນພູມມີພາກນີ້ແມ່ນຫລຸດໜ້ອຍຖອຍລົງ ເພາະຜູ້ທີ່ເຄີຍໃຫ້ທຶນຫັນປ່ຽນໄປສຸມໃສ່ໃນປະເດັນ ອື່ນໆ (ທີ່ຮູ້ກັນດີ ແມ່ນເລື່ອງ ການປ່ຽນແປງດິນຟ້າອາກາດ) ຫລື ບາງທີກໍ່ແມ່ນຖອນທຶນຊ່ວຍເຫລືອ ຈາກປະເທດນັ້ນໆໄປພ້ອມ. ຄຽງຄູ່ກັນນີ້
ການປ່ຽນປ່ຽນສະພາບເງື່ອນໄຂສະພາບການທາງດ້ານການເມືອງ ແລະ ເສດຖະກິດ
ຍິ່ງສ້າງຄວາມສະດວກໃຫ້ບັນດາບໍລິສັດລົງທຶນເອກະຊົນເຂົ້າມາສຸມການລົງທຶນໃສ່
ການພັດທະນາໄຟຟ້າພະລັງງານນ້ຳ, ປູກພືດອຸດສະຫາກຳ, ບໍ່ແຮ່ ແລະ ອຸດສະກຳອື່ນໆ ທີ່ສ້າງຜົນກະ ທົບຕໍ່ສະພາບແວດລ້ອມຢ່າງໃຫຍ່ຫລວງສົມຄວນ. ຖ້າເບິ່ງແນວໂນ້ມຂອງການລົງທຶນນັ້ນໃນຂະນະນີ້ ແມ່ນສະແດງໃຫ້ເຫັນຢ່າງຈະແຈ້ງວ່າມັນຄືສິ່ງທີ່ທ້າທາຍທີ່ສຸດຕໍ່ການອະນຸລັກ, ແຕ່ການພັດທະນາໃນທາງ ບວກພັດມີການເຕີບໂຕຂອງອົງການຈັດຕັ້ງສັງຄົມພາຍໃນປະເທດສູງຂຶ້ນ ທີ່ມີສ່ວນຮ່ວມຢ່າງຈິງຈັງ ໃນດ້ານການອະນຸລັກຊີວະນາໆພັນ, ການພັດທະນາແບບຍືນຍົງ, ການແກ້ໄຂຄວາມທຸກຍາກ ແລະ ຄວາມເທົ່າທຽມກັນໃນສັງຄົມ.

ການເຕີບໂຕຂະຫຍາຍຕົວຂອງອົງການຈັດຕັ້ງສັງຄົມຕ່າງໆນັ້ນ ມັນສະແດງໃຫ້ເຫັນໂອກາດທີ່ດີ ຂອງ ກອງທຶນ CEPF ແລະ ກອງທຶນອື່ນໆ ເພື່ອສະໜັບສະໜູນການປະສານຮ່ວມມືກັນຂອງ ບັນດາອົງການ ຈັດຕັ້ງສັງຄົມເລົ່ານັ້ນ ທີ່ລວມເອົາອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານສາກົນ ເຖິງອົງການຈັດຕັ້ງລະດັບ ຊຸມຊົນ ແລະ ເພື່ອສ້າງກຸ່ມກອງທຶນຮວມທຶນເຂົ້າໃສ່ແກ້ໄຂສິ່ງທ້າທາຍທີ່ມາຈາກຫລາຍມູມມອງ.

ຍຸດທະສາດການລົງທຶນທີ່ຮ່ວມນຳກັນນັ້ນຈຶ່ງວາງອອກຢ່າງຈະແຈ້ງໃນເອກະສານລະອຽດລະບົບນິເວດສະບັບນີ້ ເພື່ອເຮັດໃຫ້ເປັນໂຄງປະກອບລວມສຳລັບການພັດທະນາການຮ່ວມມືກັນໃນດ້ານນີ້ ທີ່ຕ້ອງການໃນຫລາຍລະດັບ ເຊັ່ນ: ລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພູມມິພາກ. ດັ່ງນັ້ນ, ຍຸດທະສາດການລົງທຶນຈຶ່ງເປັນທັງຄວາມໄຝ່ຝັນ ແລະ ຕົວບົ່ງບອກລຳດັບຂອງສິ່ງທ້າທາຍທີ່ເຂດຫລໍ່ແຫລມພູມມິພາກອິນໂດ-ມຽນມ້າ ທີ່ກຳລັງປະເຊີນໜ້າໃນຂະນະນີ້. ແຕ່ເຖິງຢ່າງໃດ ສິ່ງທີ່ສົມມຸດຖານໃນທີ່ນີ້ ບໍ່ແມ່ນຈະເປັນທີ່ແນ່ນອນວ່າ ທັງໝົດສິ່ງທ້າທາຍນັ້ນໆຈະຕ້ອງໄດ້ຮັບການແກ້ໄຂພາຍໃນຊ່ວງໄລຍະເວລາ 5 ປີນີ້ໄດ້ໝົດ. ແຕ່ດ້ວຍຄວາມມຸ່ງຫວັງໃນການສະໜັບສະໜູນທຶນ ເພື່ອຊຸກຍູ້ໃຫ້ອົງການຈັດຕັ້ງສັງຄົມຕ່າງໆເລົ່ານີ້ໄດ້ເຄື່ອນໄຫວວຽກງານ, ກອງທຶນ CEPF ເຊື່ອວ່າ ພວກເຮົາສາມາດສ້າງພື້ນຖານທີ່ແຂງແກ່ນດີສົມຄວນໃນດ້ານຄວາມອາດສາມາດ, ຄວາມຮູ້ ແລະ ປະສົບການ ທີ່ເຮັດໃຫ້ວິທີການແກ້ໄຂບັນຫານັ້ນ ເຂັ້ມແຂງ, ຂະຫຍາຍຕົວ ແລະ ມີສ່ວນຮ່ວມດີຂຶ້ນໄປເປັນກ້າວໆ.